# ໃບຢັ້ງຢືນສະຖານປະກອບການຄູ່ຮ່ວມງານ ອສຄ

# DCT Partner COMPANY CERTIFICATION

## ຜົນປະໂຫຍດ ແລະ ສິ່ງຈູງໃຈ

## BENEFITS AND INCENTIVES

ເນື່ອງຈາກ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ໄດ້ສົ່ງເສີມ ອາຊີວະສຶກສາຮູບແບບຄວບຄູ່ (ອສຄ) ເຊິ່ງເປັນເສັ້ນທາງ ສູ່ວຸດທິ ແລະ ຄຸນສົມບັດທີ່ຕ້ອງການ ໃນລະບົບ ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຢ່າງເປັນທາງການ, ສຄອຊ ພວກເຮົາ ຍິນດີເປັນຢ່າງຍິ່ງ ທີ່ມີສະຖານປະກອບການຂອງທ່ານ ເປັນຄູ່ຮ່ວມງານຢ່າງມີຄຸນຄ່າ ໃນຄວາມພະຍາຍາມລະດັບຊາດນີ້.

ການເຂົ້າຮ່ວມໃນອາຊີວະສຶກສາແບບຄວບຄູ່ ຊ່ວຍເພີ່ມມູນຄ່າໃຫ້ກັບ ທຸລະກິດຂອງທ່ານ.

ສຄອຊ ຈະຢັ້ງຢືນການເຂົ້າຮ່ວມ ອສຄ ຂອງສະຖານປະກອບການຂອງທ່ານ ໂດຍບໍ່ເສຍຄ່າໃນເບື້ອງຕົ້ນ. ໃນຖານະສະຖານປະກອບການ ທີ່ໄດ້ຮັບການຮັບຮອງ ທ່ານໄດ້ເຮັດການຕັດສິນໃຈ ຢ່າງໜ້າຊື່ນຊົມ ທີ່ຈະລົງທຶນຢ່າງຕໍ່ເນື່ອງເພື່ອພັດທະນາ ທັກສະ ແລະ ຜະລິດຕະພາບ ການເຮັດວຽກ ຂອງຜູ້ອອກແຮງງານ ແລະ ຜູ້ຮັບການຝຶກອົບຮົມ/ນັກຮຽນອາຊີວະສຶກສາ ພາຍໃຕ້ຄຳຂວັນ

**ອະນາຄົດຂອງຊາວໜຸ່ມ - ອະນາຄົດຂອງຊາດ - ແມ່ນ ພາລະກິດຂອງພວກເຮົາ**
**ການມີສ່ວນຮ່ວມເພື່ອທັກສະທີ່ດີເລີດ**

ສຄອຊ ໃນຖານະຄູ່ຮ່ວມງານ ທາງທຸລະກິດກັບທ່ານ, ໃຫ້ຄຳໝັ້ນວ່າຈະ:

- ໃຫ້ບໍລິການ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ກັບທ່ານ ເພື່ອຮັບປະກັນວ່າການຝຶກອົບຮົມ ໃນສະຖານອາຊີວະສຶກສາ ກົງກັບຄວາມຕ້ອງການ ຂອງຕະຫຼາດແຮງງານ ແລະ ສະທ້ອນໃຫ້ເຫັນໃນຫຼັກສູດ ແລະ ຊຸດການຮຽນການສອນ;
- ສະໜັບສະໜູນ ສຳລັບການແຂ່ງຂັນ ທີ່ເອື້ອອຳນວຍ ແລະ ສະເໝີພາບ ໃນການສຶກສາ ແລະ ຝຶກອົບຮົມວິຊາຊີບ ແລະ ລະບຽບການ ທີ່ໃຫ້ສິ່ງຈູງໃຈ ແກ່ສະຖານປະກອບການຄູ່ຮ່ວມງານ ອສຄ ແລະ ຜ່ານການຮັບຮອງ ເຊັ່ນ: ການຮຽກເກັບຄືນຕົ້ນທຶນຄ່າຝຶກອົບຮົມ.
- ກຳນົດ ແລະ ສົ່ງເສີມ ການລວມຂະແໜງທີ່ເປັນບຸລິມະສິດ ແລະ ອາຊີບ ທີ່ເໝາະສົມສຳລັບ ຊຸດການຮຽນ-ການສອນ ອສຄ.

**ສະຖານປະກອບການ ທີ່ເຂົ້າຮ່ວມ ອສຄ ແລະ ໄດ້ຮັບການຢັ້ງຢືນຮັບຮອງ ຈະໄດ້ຮັບສິດຜົນປະໂຫຍດ ແລະ ສິ່ງຈູງໃຈຫຼາກຫຼາຍ.**

**ຜົນປະໂຫຍດໂດຍກົງ ຂອງທ່ານໃນຖານະ ເປັນສະຖານປະກອບການຄູ່ຮ່ວມງານ ອສຄ ທີ່ໄດ້ຮັບການຮັບຮອງ:**

- ການຊ່ວຍເຫລືອ ແລະ ອຳນວຍຄວາມສະດວກຈາກ ປ່ອງບໍລິການປະຕູດຽວ ອສຄ (DCT Help Desk) ຢູ່ ສຄອຊ ແລະ ສຄອ ແຂວງ ຫຼວງພະບາງ, ແຂວງ ຈຳປາສັກ ແລະ ນະຄອນຫຼວງວຽງຈັນ.

- ການສະໜັບສະໜູນ ແລະ ອໍານວຍຄວາມສະດວກໃນການຈັດຫານັກຮຽນຝຶກງານ ອສຄ ກັບສະຖານອາຊີວະສຶກສາ.
- ສິດທິພິເສດ ໃນການເຂົ້າຮັບຝຶກອົບຮົມ "ການເປັນຄູຝຶກຂອງສະຖານປະກອບການ" ໃນຊຸດຝຶກອົບຮົມພາຍໃນປະເທດ ແລະ ຕ່າງປະເທດ.
- ນັກຮຽນຝຶກງານ ຈາກສະຖານອາຊີວະສຶກສາ ໄດ້ນໍາຄວາມຮູ້ ແລະ ທັກສະພື້ນຖານ ຕິດຕົວພວກເຂົາໄປດ້ວຍ.
- ສະຖານການສຶກສາແບ່ງປັນ ຄ່າໃຊ້ຈ່າຍໃນການຝຶກຜູ້ອອກແຮງງານໃນອະນາຄົດ.
- ນັກຮຽນຝຶກງານ ຈະເປັນສ່ວນໜຶ່ງ ຂອງທີມງານທ່ານ ແລະ ດ້ວຍເຫດນີ້ ຈຶ່ງເປັນການຊ່ວຍແບ່ງເບົາພາລະການງານ ໃນສະຖານປະກອບການຂອງທ່ານ.
- ສະໜັບສະໜູນການຝຶກອົບຮົມ ໃນສະຖານປະກອບການຂອງ ທ່ານ ແລະ ຊ່ວຍຈັດການສິ່ງທ້າທາຍທີ່ທ່ານອາດພົບເຫັນ.
- ທ່ານ ໄດ້ຮັບຮູ້ສັກກະຍະພາບ ຂອງ ພະນັກງານໃນອະນາຄົດ ແລະ ແນະນໍາແນວທາງ ໃຫ້ພວກເຂົາ ເພື່ອໃຫ້ກາຍເປັນ ສະມາຊິກທີ່ມີປະສິດທິຜົນ ແລະ ມີຄວາມຈົ່ງຮັກພັກດີ ໃນທີມງານຂອງ ທ່ານ.
- ເຄື່ອງໝາຍສັນຍາລັກ ແລະ ໃບຮັບຮອງ "ສະຖານປະກອບການຄູ່ຮ່ວມງານ ອສຄ" ລະບຸວ່າ ສະຖານປະກອບການ ຂອງ ທ່ານເປັນຄູ່ຮ່ວມງານ ອສຄ ທີ່ໂດດເດັ່ນ.
- ການຮັບຮອງ "ສະຖານປະກອບການຄູ່ຮ່ວມງານ ອສຄ" ມອບສະຖານະໃຫ້ ທ່ານ ໃນຖານະທີ່ເປັນຜູ້ນໍາພາກທຸລະກິດທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ໃນການເບິ່ງເຫັນຈາກສາທາລະນະ.
- ການຮັບຮອງ "ສະຖານປະກອບການຄູ່ຮ່ວມງານ ອສຄ" ສະແດງໃຫ້ເຫັນ ການຍອມຮັບໃນຄວາມມຸ້ງໝັ້ນຂອງ ທ່ານ ໃນການຝຶກອົບຮົມ ຜູ້ອອກແຮງງານທີ່ມີວຸດທິ, ທັກສະ ແລະ ຄຸນສົມບັດເໝາະສົມ.
- ການຮັບຮອງ "ສະຖານປະກອບການຄູ່ຮ່ວມງານ ອສຄ" ຊ່ວຍເພີ່ມພາບພົດຂອງ ສະຖານປະກອບການ ແລະ ເພີ່ມການຈົດຈໍາຂອງລູກຄ້າເນື່ອງຈາກ ເປັນການຮັບຊາບເຖິງຄວາມພະຍາຍາມໃນການປັບປຸງຜະລິດຕະພັນ ແລະ ການບໍລິການ.

**ລາຍການສິ່ງຈູງໃຈໂດຍຫຍໍ້**

| ຜົນປະໂຫຍດ / ສິ່ງຈູງໃຈ | "ສະຖານປະກອບການຄູ່ຮ່ວມງານ ອສຄ" | "ສະຖານປະກອບການຄູ່ຮ່ວມງານ ອສຄ" ແລະ ສະມາຊິກ ສຄອຊ † |
|---|---|---|
| ການຢັ້ງຢືນ "ສະຖານປະກອບການຄູ່ຮ່ວມງານ ອສຄ" ແມ່ນບໍ່ມີຄ່າໃຊ້ຈ່າຍ | ✓ | ✓ |

| | | |
|---|---|---|
| ຮັບເຄື່ອງໝາຍສັນຍາລັກ ແລະ ໃບຮັບຮອງ "ສະຖານປະກອບການຄູ່ຮ່ວມງານ ອສຄ" | ✓ | ✓ |
| ຮ່ວມງານຖະແຫຼງຂ່າວ ມອບ-ຮັບ ເຄື່ອງໝາຍສັນຍາລັກ | ✓ | ✓ |
| ເຂົ້າຮ່ວມ ແລະ ຮັບຮູ້ ໃນງານພິທີມອບ-ຮັບ ເປັນທາງການຢ່າງຫຍິ່ງໃຫຍ່ ລະດັບແຂວງ ພ້ອມການເຂົ້າຮ່ວມຂອງສື່ມວນຊົນ | ✓ | ✓ |
| ການຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກ ແບບຄົບວົງຈອນ ໂດຍສູນບໍລິການ ອສຄ | ✓ | ✓ |
| ຫຼັກສູດ ສໍາລັບການຈັດຕັ້ງປະຕິບັດ ອາຊີວະສຶກສາຮູບແບບຄວບຄູ່ | ✓ | ✓ |
| ການປະຊາສັມພັນຜ່ານ Facebook ແລະ ເວັບໄຊນ໌ ສູນບໍລິການອາຊີວະສຶກສາແບບຄວບຄູ່ | ✓ | ✓ |
| ມີຄຸນສົມບັດເໝາະສົມ ສໍາລັບລາງວັນ ການພັດທະນາທຸລະກິດ ແລະທັກສະ ລະດັບຊາດ ແລະ ລະດັບອາຊຽນ. | ✓ | ✓ |
| ນໍາສະເໜີ ເປັນພິເສດໃນພື້ນທີ່ ເວັບໄຊຂອງ ສຄອຊ ສໍາລັບ "ສະຖານປະກອບການຄູ່ຮ່ວມງານ ອສຄ" ທີ່ໂດດເດັ່ນ.* | ✓ | ✓ |
| ຂຶ້ນໂລໂກ້ ຂອງສະຖານປະກອບການຄູ່ຮ່ວມງານ ອສຄ ໃສ່ປ້າຍການຈັດງານທີ່ກ່ຽວຂ້ອງ. | ✓ | ✓ |
| ອອກໂຄສະນາ ແລະ ບົດຄວາມ ຕາມໜັງສືພິມ ແລະ ວາລະສານ ທີ່ກ່ຽວຂ້ອງກັບກິດຈະກໍາ ອສຄ. | ✓ | ✓ |
| ຖືກເຊີນໃຫ້ເຂົ້າຮ່ວມ ກິດຈະກໍາສ້າງເຄືອຂ່າຍສະເພາະຂອງ ອສຄ. | ✓ | ✓ |
| ເຂົ້າຮ່ວມງານມະຫະກໍາສີມືແຮງງານ ແລະ ງານວາງສະແດງສິນຄ້າ | ✓ | ✓ |
| ຖືກເຊີນເຂົ້າຮ່ວມ ກອງປະຊຸມວິຊາການກ່ຽວຂ້ອງ ກັບ ອສຄ ໃນລະດັບອາຊຽນ (ASEAN Future Workforce Council). | ✓ | ✓ |
| ໄດ້ຮັບສິດທິພິເສດ ໃນການເຂົ້າເຖິງງານຂາຍ ແລະ ງານສະແດງສິນຄ້າທີ່ຈັດໂດຍ ສຄອຊ ຫຼື ໄດ້ຮັບສິດພິເສດໃນການເຂົ້າເຖິງ ສຄອຊ | ✓ | ✓ |
| ມີສ່ວນຫຼຸດພິເສດໃນການເຂົ້າເຖິງງານຂາຍ ແລະ ງານສະແດງສິນຄ້າ ທີ່ຈັດໂດຍ ສຄອຊ ຫຼື ໄດ້ຮັບສິດພິເສດໃນການເຂົ້າເຖິງ ສຄອຊ. | | ✓ |
| ມີໂລໂກ້ ອສຄ ໃນປຶ້ມລາຍຊື່ສະມາຊິກຂອງ ສຄອຊ. | | ✓ |
| ໄດ້ຮັບບຸລິມະສິດພິເສດ ໃນການເຂົ້າຮ່ວມເປັນຄະນະ ທັງພາຍໃນ ແລະສາກົນ. | | ✓ |
| ເຂົ້າເຖິງກິດຈະກໍາຂໍ້ມູນ ທີ່ກ່ຽວຂ້ອງກັບບໍລິສັດຂອງທ່ານ. | | ✓ |

| | | |
|---|---|---|
| ເຂົ້າຮ່ວມປະຊຸມການຄ້າ ແລະ ພົບປະຜູ້ແທນການຄ້າ ຈາກທົ່ວປະເທດ. | | ✓ |
| ເຂົ້າຮ່ວມປະຊຸມ ແລະ ປະຊຸມທາງການ ໃນການສະເໜີບັນຫາແຕ່ລະຂະແໜງການທຸລະກິດ ແລະ ສະເໜີຄຳຄິດເຫັນຕໍ່ຮ່າງລະບຽບການ ແລະ ນິຕິກຳ ອື່ນໆ. | | ✓ |
| ໄດ້ຮັບໂອກາດ ໃນການເດີນທາງໄປຕ່າງປະເທດຮ່ວມກັບຄະນະຜູ້ແທນທຸລະກິດລາວ ເພື່ອເຈລະຈາຂໍ້ຕົກລົງການຄ້າ-ການລົງທຶນ. | | ✓ |
| ເຂົ້າຮ່ວມງານພົບປະສ້າງສັນເຄືອຂ່າຍ ແລະ ຊອກຫາຄູ່ຄ້າ/ທຸລະກິດ ທັງໃນປະເທດ ແລະ ຕ່າງປະເທດ. | | ✓ |
| ເຂົ້າຮ່ວມກອງປະຊຸມສາມັນປະຈຳປີ ຂອງ ສຄອຊ, ເຂົ້າຮ່ວມເລືອກຕັ້ງ ແລະ ສະໝັກເລືອກຕັ້ງເປັນຄະນະບໍລິຫານງານ ສຄອຊ. | | ✓ |
| ເຂົ້າຮ່ວມຄັດເລືອກເປັນນັກທຸລະກິດດີເດັ່ນ ທັງພາຍໃນ ແລະ ສາກົນ. | | ✓ |
| ເຂົ້າຮ່ວມການສຳມະນາ ແລະ ຝຶກອົບຮົມທີ່ຫຼາກຫຼາຍຫົວຂໍ້. | | ✓ |
| ໄດ້ຮັບຄຳປຶກສາ, ຄຳແນະນຳ ຈາກຄະນະບໍລິຫານງານ ສຄອຊ ໃນການດຳເນີນທຸລະກິດ, ການພັດທະນາຜະລິດຕະພັນ, ການຕະຫຼາດ, ການແກ້ໄຂຂໍ້ຂັດແຍ່ງ, ບຸກຄະລາກອນ, ການຈ້າງງານ ແລະ ອື່ນໆ. | | ✓ |
| ມີໂປຣຟາຍຂອງບໍລິສັດໃນຖານຂໍ້ມູນ ແລະ ປຶ້ມລາຍຊື່ສະມາຊິກທຸລະກິດຂອງ ສຄອຊ. | | ✓ |
| ບຸລິມະສິດ ເພື່ອໂຄສະນາບໍລິສັດໃນເວັບໄຊ, ປຶ້ມສະມາຊິກ ແລະ ການໂຄສະນາອື່ນໆຂອງ ສຄອຊ. | | ✓ |
| ຮັບຂໍ້ມູນຂ່າວສານ ແລະ ການແຈ້ງການກ່ຽວກັບການເຂົ້າຮ່ວມກິດຈະກຳກັບ ສຄອຊ. | | ✓ |
| ຮັບຂໍ້ມູນຂ່າວສານບົດລາຍງານທຸລະກິດ ຜ່ານທາງອີເມວ ແລະ ແອັບພລິເຄຊັ້ນຂອງ ສຄອຊ (LNCCI Application). | | ✓ |
| ໄດ້ຮັບສິດເຕັມສ່ວນ (= ສະມາຊິກ)ໃນການເຂົ້າເຖິງ ເວັບໄຊ ສຄອຊ. | | ✓ |
| ຮັບຄຳແນະນຳ ແລະ ໃຫ້ຂໍ້ມູນ ກ່ຽວກັບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ. | | ✓ |
| ຮັບຄຳແນະນຳ ແລະ ຂໍ້ມູນ ກ່ຽວກັບການນຳສິນຄ້າໄປວາງສະແດງຢູ່ຕ່າງປະເທດ. | | ✓ |
| ຮັບສິດເຂົ້າຮ່ວມເປັນຜູ້ຊົມ ແລະ ຜູ້ຊື້ ໃນງານວາງສະແດງທັງພາຍໃນ ແລະ ຕ່າງປະເທດ. | | ✓ |

† ສິດປະໂຫຍດເພີ່ມເຕີມ ໃຊ້ກັບຊະມາຊິກ VIP ແລະ VVIP

* ໃຊ້ສະເພາະກັບ ສະຖານປະກອບການ ທີ່ໄດ້ຮັບລາງວັນ ອສຄ ຫຼື ຝຶກອົບຮົມນັກຮຽນ ອາຊີວະສຶກສາແບບຄວບຄູ່ ເປັນຈຳນວນຫຼາຍ.